**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ເລກທີ 1126 /ຫຄຊກລ.ຄມ

ນະຄອນຫລວງວຽງຈັນ, ວັນທີ 15 ທັນ 01 2023

# ບົດບັນທຶກກອງປະຊຸມ
# ວິຊາການກ່ຽວກັບການຄຸ້ມຄອງຖານຂໍ້ມູນ ລບຕ ປະຈຳໄຕມາດ 4 ປີ 2023

## I ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການກ່ຽວກັບການຄຸ້ມຄອງຖານຂໍ້ມູນ ລບຕ ປະຈຳໄຕມາດ 4 ປີ 2023 ທີ່ຫ້ອງປະຊຸມຂອງ ໂຮງແຮມລາວພລາຊາ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ດວງສີ ທຳມະວົງ, ຮອງຫົວໜ້າ ຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຊ່ຽວຊານຕາງໜ້າຈາກອົງການສະຫະປະຊາຊາດ, ຫົວໜ້າໜ່ວຍງານຄຸ້ມ ຄອງຖານຂໍ້ມູນ, ວິຊາການໜ່ວຍງານຄຸ້ມຄອງຖານຂໍ້ມູນ ແລະ ໜ່ວຍງານໂຄສະນາ ສຶກສາຄວາມສ່ຽງໄພ, ໜ່ວຍ ງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຫ້ອງການ ຄຊກລ, ວິຊາການ ແລະ ຊ່ຽວຊານ ຈາກ 07 ອົງການມະນຸດສະທຳ (ໂຄງການເກັບກູ້ລະເບີດແຫ່ງຊາດ, ອົງການເອັນພີເອ, ອົງການຮາໂລທຣັສ, ອົງການແມັກປະຈຳ ສປປ ລາວ, ກອງ ກວດກູ້ເພື່ອມະນຸດສະທຳກອງທັບ 58, ກົມຂະບວນການ ສູນກາງຊາວໜຸ່ມປະຊາຊົນ ປະຕິວັດລາວ, ອົງການ World Education) ແລະ ບໍລິສັດມິນເຊີດເກັບກູ້ລະເບີດ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ ຈຳນວນ 31 ທ່ານ ເປັນເພດຍິງ 07 ທ່ານ.

## II ຈຸດປະສົງ

- ເພື່ອນຳສະເໜີການຈັດຕັ້ງປະຕິບັດຜົນຂອງກອງປະຊຸມ ໃນໄຕມາດທີ່ຜ່ານມາ;
- ເພື່ອລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຂໍ້ມູນ ປະຈຳໄຕມາດ 4 ປີ 2023 ແລະ ແຜນການຈັດຕັ້ງປະຕິບັດ ໄຕມາດ 1 ປີ 2024 ຂອງໜ່ວຍງານຄຸ້ມຄອງຖານຂໍ້ມູນ ຫ້ອງການ ຄຊກລ;
- ເພື່ອຮັບຟັງສິ່ງທ້າທາຍ ໃນການປະຕິບັດງານການຄຸ້ມຄອງຖານຂໍ້ມູນ ໃນໄຕມາດ 4 ປີ 2023 ແລະ ແຜນ ການຈັດຕັ້ງປະຕິບັດ ໄຕມາດ 1 ປີ 2024 ຂອງອົງການປະຕິບັດງານ;
- ເພື່ອນຳສະເໜີ ຄວາມຄືບໜ້າການຈັດຕັ້ງປະຕິບັດກ່ຽວກັບການເຊື່ອມສານບົດບາດຍິງຊາຍ ແລະ ຄວາມຫຼາກ ຫຼາຍ ໃນຂະແໜງການ ລບຕ
- ເພື່ອນຳສະເໜີກ່ຽວກັບຄວາມຄືບໜ້າການແກ້ໄຂຂໍ້ມູນ ທີ່ບໍ່ສົມບູນ ໃນຖານຂໍ້ມູນແຫ່ງຊາດ ແລະ ບົດລາຍ ງານປະຈຳເດືອນ / Monthly Progress Report;
- ກຳນົດວິທີທາງແກ້ໄຂບັນຫາຕ່າງໆຮ່ວມກັນ.

## III ເນື້ອໃນກອງປະຊຸມ

- ສະຫຼຸບ ການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຖານຂໍ້ມູນ ແລະ ສະຖິຕິການປະຕິບັດງານ ໃນຂະ ແໜງການ ລບຕ ສະເພາະໄຕມາດ 4 ປີ 2023

- ຮັບຟັງ ສະຫຼຸບການເຄື່ອນໄຫວວຽກງານກ່ຽວກັບການຄຸ້ມຄອງຖານຂໍ້ມູນ ປະຈຳໄຕມາດ 4 ປີ 2023 ແລະ ແຜນການປະຕິບັດງານ ໄຕມາດ 1 ປີ 2024 ຂອງອົງການປະຕິບັດງານ
- ນຳສະເໜີກ່ຽວກັບຄວາມຄືບໜ້າ ການແກ້ໄຂຂໍ້ມູນ ທີ່ບໍ່ສົມບູນ ໃນຖານຂໍ້ມູນແຫ່ງຊາດ ແລະ ການເກັບກຳບົດລາຍງານປະຈຳເດືອນ
- ນຳສະເໜີກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດກ່ຽວກັບການເຊື່ອມສານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນຂະແໜງການ ລບຕ

## IV. ຂໍ້ຕົກລົງພາຍໃນກອງປະຊຸມ

- ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຫ້ອງການ ຄຊກລ ຮ່ວມກັບໂຄງການ IM CD ສຸມໃສ່ຈັດບຸລິມະສິດການຈັດຕັ້ງປະຕິບັດແຜນກິດຈະກຳໃນໄຕມາດ 1 ປີ 2024;
- ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຫ້ອງການ ຄຊກລ ສຸມໃສ່ປັບປຸງລະບົບການລາຍງານໃຫ້ທັນເວລາ ແລະ ຊຸກຍູ້ພາກສ່ວນບໍລິສັດທີ່ບໍ່ໄດ້ລາຍງານ ໃຫ້ສາມາດລາຍງານການຈັດຕັ້ງປະຕິບັດວຽກ ເຂົ້າຖານຂໍ້ມູນແຫ່ງຊາດ;
- ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຫ້ອງການ ຄຊກລ ກວດກາຄືນ ເລື່ອງ TOR ຂອງກອງປະຊຸມວິຊາການ;
- ການປັບປຸງລະບົບ VPN ແມ່ນໃຫ້ສົມທົບກັນລະຫວ່າງໜ່ວຍງານຄຸ້ມຄອງຖານຂໍ້ມູນ ແລະ ໂຄງການ IM CD;
- ໃຫ້ໜ່ວຍງານຄຸ້ມຄອງຖານຂໍ້ມູນ ຫ້ອງການ ຄຊກລ ແຈ້ງການຫາອົງການປະຕິບັດງານ ເພື່ອປ້ອນຂໍ້ມູນຄວາມເລິກຂອງລູກລະເບີດທີ່ພົບ ເຂົ້າຖານຂໍ້ມູນ;
- ການເກັບກຳຜູ້ໄດ້ຮັບຜົນປະໂຫຍດຜ່ານສື່ອອນລາຍ ໃຫ້ໜ່ວຍງານ ໂຄສະນາສຶກສາຄວາມສ່ຽງໄພ ຄົ້ນຄວ້າເພາະຕິດພັນກັບມາດຕະຖານແຫ່ງຊາດ ແລະ ໃຫ້ເອົາເຂົ້າໃນວາລະກອງປະຊຸມວິຊາການໂຄສະນາສຶກສາຄວາມສ່ຽງໄພ;
- ການພັດທະນາການນຳໃຊ້ເຄື່ອງມື ຂອງວຽກງານກວດກາຄຸນນະພາບ, ການສຳຫຼວດ, ກວດກູ້ ທີ່ມີການໃຊ້ Sampling ແມ່ນໃຫ້ປຶກສາກັບໜ່ວຍງານຄຸ້ມຄອງຄຸນນະພາບ ແລະ ໜ່ວຍງານສຳຫຼວດ ແລະ ເກັບກູ້;
- ການທັບຊ້ອນກັນ ຂອງສະໜາມ ທີ່ບໍ່ເກີນ 5 ແມັດ ໃຫ້ສົມທົບກັບໜ່ວຍງານສຳຫຼວດ ແລະ ເກັບກູ້ ແລະ ໃຫ້ເອົາເຂົ້າໃນວາລະກອງປະຊຸມວິຊາການຂອງການສຳຫຼວດ ແລະ ເກັບກູ້.

## V. ສະຫຼຸບ

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄຳຂອບໃຈບັນດາຜູ້ແທນທີ່ເສຍສະຫຼະເວລາ ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄມສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນເວລາ 14:45 ໂມງ ຂອງວັນທີ 11 ທັນວາ 2023.

| ປະທານກອງປະຊຸມ | ໜ່ວຍງານຄຸ້ມຄອງຖານຂໍ້ມູນ |
|---|---|
| ຫ້ອງການ ຄຊກລ | |
| ດວງສີ ທຳມະວົງ | |